ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ສະພາປະຊາຊົນແຂວງໄຊຍະບູລີ

ເລກທີ 83 /ສພຂ.ຊຍ
ໄຊຍະບູລີ, ວັນທີ 5 ທັນວາ 2025

# ມະຕິ
## ກອງປະຊຸມວິສາມັນ ເທື່ອທີ 2 ຂອງສະພາປະຊາຊົນແຂວງ ຊຸດທີ IV
## ວ່າດ້ວຍການຮັບຮອງເອົາການສ້າງຕັ້ງຕາແສງຂອງອົງການປົກຄອງແຂວງ

- ອີງຕາມ ລັດຖະທຳມະນູນ ແຫ່ງ ສປປ ລາວ, ສະບັບເລກທີ 77/ສພຊ, ລົງວັນທີ 20 ມີນາ 2025;
- ອີງຕາມ ມາດຕາ 56 ຂອງກົດໝາຍວ່າດ້ວຍສະພາປະຊາຊົນຂັ້ນແຂວງ (ສະບັບປັບປຸງ) ກ່ຽວກັບກອງປະຊຸມສະໄໝວິສາມັນ, ສະບັບເລກທີ 57/ສພຊ, ລົງວັນທີ 28 ມິຖຸນາ 2024;
- ອີງຕາມຄຳແນະນຳຂອງຄະນະຈັດຕັ້ງສູນກາງພັກ ສະບັບເລກທີ 431/ຄຈສພ, ລົງວັນທີ 17 ຕຸລາ 2025 ກ່ຽວກັບການສ້າງຕັ້ງຕາແສງ;
- ອີງຕາມ ໜັງສືສະເໜີ ຂອງອົງການປົກຄອງແຂວງ ສະບັບເລກທີ 319/ຈຂ.ຊຍ, ລົງວັນທີ 4 ທັນວາ 2025.

ຜ່ານການຄົ້ນຄວ້າ, ປະກອບຄຳເຫັນ ຢ່າງເລິກເຊິ່ງ ແລະ ລະອຽດຖີ່ຖ້ວນ ຂອງບັນດາທ່ານສະມາຊິກສະພາປະຊາຊົນແຂວງ ຕໍ່ກັບໜັງສືສະເໜີຂອງອົງການປົກຄອງແຂວງ ສະບັບເລກທີ 319/ຈຂ.ຊຍ, ລົງວັນທີ 4 ທັນວາ 2025 ກ່ຽວກັບການສ້າງຕັ້ງຕາແສງ ໃນກອງປະຊຸມວິສາມັນ ເທື່ອທີ 2 ຂອງສະພາປະຊາຊົນແຂວງ ຊຸດທີ IV, ຄັ້ງທີ 5 ທັນວາ 2025.

## ກອງປະຊຸມ ຕົກລົງ:

**ມາດຕາ 1** ເຫັນດີຮັບຮອງເອົາການສ້າງຕັ້ງຕາແສງຕາມການສະເໜີຂອງອົງການປົກຄອງແຂວງ ມີດັ່ງນີ້:

**1.1. ເມືອງ ໄຊຍະບູລີ ມີ 6 ຕາແສງ ຄື:**

1). ຕາແສງ ໄຊຍະມຸງຄຸນ.
2). ຕາແສງ ນາຕາກ-ນາມອນ.
3). ຕາແສງ ນາກວາງ.
4). ຕາແສງ ນາຫຼາ-ທ່າເດື່ອ.
5). ຕາແສງ ນາລອມ-ນ້ຳຕອນ.
6). ຕາແສງ ນາຊ່ຳ-ຫ້ວຍຂີ້ຫູງ.

**1.2. ເມືອງ ຄອບ ມີ 3 ຕາແສງ ຄື:**

1). ຕາແສງ ນ້ຳພ້າວ.
2). ຕາແສງ ປາກຄອບ.

สแกนด้วย CamScanner

3). ຕາແສງ ມ່ວງມີໄຊ.

1.3. ເມືອງ ຊຽງຮ່ອນ ມີ 5 ຕາແສງ ຄື:

1). ຕາແສງ ຊຽງລົມ.

2). ຕາແສງ ທົ່ງກາບ.

3). ຕາແສງ ລາວສະໂບ.

4). ຕາແສງ ນິກສະຖາ.

5). ຕາແສງ ປາກເປັດ.

1.4. ເມືອງ ເງິນ ມີ 3 ຕາແສງ ຄື:

1). ຕາແສງ ເງິນມີໄຊ.

2). ຕາແສງ ສິບໄຊ.

3). ຕາແສງ ສາມັກຄີໄຊ.

1.5. ເມືອງ ທົ່ງສາ ມີ 5 ຕາແສງ ຄື:

1). ຕາແສງ ທົ່ງສາວະກີ.

2). ຕາແສງ ເມືອງຫານ.

3). ຕາແສງ ຄົກແອກ.

4). ຕາແສງ ປຸ່ງຄຳ.

5). ຕາແສງ ທ່າຊ່ວງ.

1.6. ເມືອງ ໄຊສະຖານ ມີ 3 ຕາແສງ ຄື:

1). ຕາແສງ ສະເມດ.

2). ຕາແສງ ໄຊສະນະ.

3). ຕາແສງ ກໍ່ສາມະຄີ.

1.7. ເມືອງ ພຽງ ມີ 5 ຕາແສງ ຄື:

1). ຕາແສງ ໃຮມໄຊ.

2). ຕາແສງ ທົ່ງນາພຽງ.

3). ຕາແສງ ນາສະຫວັນ.

4). ຕາແສງ ມີໄຊສະນະ.

1) ຕາແສງ ອາດໄຊຍະພູມ.

1.8. ເມືອງ ປາກລາຍ ມີ 6 ຕາແສງ ຄື:

1). ຕາແສງ ບວມເລົາ-ຜາແກ້ວ.

2). ຕາແສງ ສຸວັນນະພູມ.

3). ຕາແສງ ເມືອງວາ.

4). ຕາແສງເມືອງປາ-ນາຈັນ.

5). ຕາແສງໄຊມຸງຄຸນ.

6). ຕາແສງ ປຸ່ງປາ-ຕາກແດດ.

1.9. ເມືອງ ທົ່ງມີໄຊ ມີ 2 ຕາແສງ ຄື:

1). ຕາແສງ ມີໄຊ.

2). ຕາແສງ ທົ່ງໃຫຍ່.

1.10. ເມືອງ ແກ່ນທ້າວ ມີ 4 ຕາແສງ ຄື:

1). ຕາແສງ ທ້າວແກ່ນ.

สแกนด้วย CamScanner

สแกนด้วย CamScanner

2). ຕາແສງ ຫ້ວຍເລິກ.

3). ຕາແສງ ປາກແຄມ.

4). ຕາແສງ ດອນເມນ.

**1.11. ເມືອງ ບໍ່ແຕນ ມີ 3 ຕາແສງ ຄື:**

1). ຕາແສງ ເມືອງຣໍາ-ນໍ້າພູ.

2). ຕາແສງ ບໍ່ແຕນ.

3). ຕາແສງ ນາບໍ່ນ້ອຍ.

ມາດຕາ 2 ມອບໃຫ້ຄະນະກໍາມະການປົກຄອງເມືອງ ຄົ້ນຄວ້າສ້າງນິຕິກໍາທີ່ຈໍາເປັນ, ປັບປຸງພື້ນຖານໂຄງລ່າງຂອງບັນດາຕາແສງ, ຊັບຊ້ອນພະນັກງານບັນຈຸເຂົ້າໃນບັນດາໜ່ວຍງານຂອງຕາແສງ ແລະ ຈັດສັນງົບປະມານຮັບໃຊ້ວຽກງານຕາແສງໃຫ້ມີຄວາມເໝາະສົມ.

ມາດຕາ 3 ມອບໃຫ້ຄະນະກໍາມະການປົກຄອງແຂວງ ສົມທົບກັບພາກສ່ວນກ່ຽວຂ້ອງ ຄົ້ນຄວ້າ, ກະກຽມຄວາມພ້ອມ ແລະ ປະກາດການສ້າງຕັ້ງຕາແສງໃນຂອບເຂດທົ່ວແຂວງ ໃຫ້ສໍາເລັດໂດຍໄວ.

ມາດຕາ 4 ບັນດາອົງການຈັດຕັ້ງພັກ-ລັດ, ປະຊາຊົນບັນດາເຜົ່າ ຈົ່ງຮັບຮູ້ ແລະ ຈັດຕັ້ງປະຕິບັດມະຕິສະບັບນີ້ ໃຫ້ມີຜົນສໍາເລັດສູງ.

ມາດຕາ 5 ມະຕິສະບັບນີ້ ມີຜົນສັກສິດນັບແຕ່ວັນລົງລາຍເຊັນເປັນຕົ້ນໄປ./

ປະທານສະພາປະຊາຊົນແຂວງ

ເພັງນິລັນ ຄໍາພັນເພັງ

สแกนด้วย CamScanner
สแกนด้วย CamScanner